ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 109 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2023

# ໜັງສືແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕໍາຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີຄວາມມີສະຕິລະວັງຕົວໃນການແລກປ່ຽນເງິນຕານໍາບຸກຄົນ ແລະ ນິຕິບຸກຄົນທີ່ບໍ່ໄດ້ຮັບອະນຸຍາດແລກປ່ຽນເງິນຕາຈາກ ທະນາຄານແຫ່ງ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15 /ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາ ສະບັບເລກທີ 1026/ທຫລ, ລົງວັນທີ 28 ທັນວາ 2022;
- ອີງຕາມແຈ້ງການຢຸດຕິການອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ ສະບັບເລກທີ 01/ທຫລ, ລົງວັນທີ 13 ມັງກອນ 2023.

ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕໍາຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ຊາບວ່າ: ໃນໄລຍະຜ່ານມາ ທະນາຄານແຫ່ງ ສປປ ລາວ ໄດ້ອອກແຈ້ງຢຸດຕິການອະນຸຍາດດໍາເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາໃນຂອບເຂດທົ່ວປະເທດ ທັງໝົດ 419 ຮ້ານ ໝາຍວ່າ ສປປ ລາວ ແມ່ນບໍ່ມີການອະນຸຍາດດໍາເນີນທຸລະກິດຮ້ານແລກປ່ຽນເງິນຕາແລ້ວ. ຜ່ານການຕິດຕາມກວດກາ ເຫັນວ່າ ມີບຸກຄົນ ຫຼື ນິຕິບຸກຄົນຈໍານວນໜຶ່ງ ຍັງມີການສວຍໃຊ້ຄວາມຊົມເຄີຍກັບລູກຄ້າຂອງຕົນ ແລະ ມີການໃຫ້ບໍລິການແລກປ່ຽນເງິນຕາທີ່ບໍ່ໄດ້ຮັບອະນຸຍາດໃຫ້ແກ່ສັງຄົມ. ຕໍ່ກັບບັນຫາດັ່ງກ່າວ ທະນາຄານແຫ່ງ ສປປ ລາວ ໄດ້ມີການລົງຕິດຕາມກວດກາ ແລະ ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ ໃນການປະຕິບັດມາດຕະການທາງກົດໝາຍຕໍ່ຫົວໜ່ວຍທຸລະກິດທີ່ໃຫ້ບໍລິການແລກປ່ຽນເງິນຕາທີ່ບໍ່ຖືກຕ້ອງດັ່ງກ່າວແຕ່ລະໄລຍະ.

ເຖິງຢ່າງໃດກໍຕາມ, ເພື່ອປະຕິບັດໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ບໍ່ເປັນການຊຸກຍູ້ສົ່ງເສີມການແລກປ່ຽນເງິນຕາທີ່ບໍ່ຖືກຕ້ອງ ແລະ ປ້ອງກັນຄວາມສ່ຽງຈາກປະກົດການຫຍໍ້ທໍ້ຂອງສັງຄົມ ທະນາຄານແຫ່ງ ສປປ ລາວ ຂໍຄວາມຮ່ວມມືມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ,



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ທະຫານ ແລະ ຕໍາຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ໃຫ້ນໍາໃຊ້ບໍລິການປ່ຽນເງິນຕານໍາ ທະນາຄານທຸລະກິດ, ໜ່ວຍບໍລິການ ແລະ ໜ່ວຍແລກປ່ຽນເງິນຕາ ຂອງທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເທົ່ານັ້ນ ຫຼີກລ່ຽງການໃຊ້ບໍລິການແລກປ່ຽນເງິນຕານໍາ ບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດ ລວມທັງຜູ້ທີ່ມີການໂຄສະນາແລກປ່ຽນເງິນຕາຜ່ານສື່ ແລະ ຊ່ອງທາງອອນລາຍຕ່າງໆ ຊຶ່ງຖືວ່າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕໍາຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ມີສະຕິໃນການແລກປ່ຽນເງິນຕາ.

ຮ, ຫົວໜ້າຫ້ອງການ

ສຸກັນ ຈັນທະວົງ